# ວິທີຍື່ນຄຳຮຽກຮ້ອງຮັບເງິນປະກັນວ່າງງານ

ທ່ານສາມາດຍື່ນຄຳຮຽກຮ້ອງເພື່ອຮັບເງິນປະກັນວ່າງງານ ດ້ວຍທ່ານເອງຈະໄປຍື່ນຢູ່ທີ່ຫ້ອງການພະແນກບໍລິການຄົນງານ DWS ທຸກບ່ອນ, ຫລືຍື່ນທາງອິນເທີແນັດໂດຍໃຊ້ລະບົບ *EZARC* *http://www.ezarc.adws.arkansas.gov*, ຫລື ຍື່ນແບບຟອຣ໌ມທາງໄປສະນີສຳລັບຮຽກຮ້ອງເງິນປະກັນວ່າງງານ. ທ່ານຕ້ອງມີເງື່ອນໄຂບາງຢ່າງໃຫ້ຖືກຕ້ອງໃນແຕ່ລະອາທິດ ທ່ານຈຶ່ງຈະມີສິດຮັບເງິນວ່າງງານໄດ້ສຳລັບອາທິດນັ້ນ.

**ເພື່ອທ່ານຈະມີສິດຮັບໄດ້** ທ່ານຕ້ອງ:

A. ວ່າງງານ ຫລື ຖືກລົດຊົ່ວໂມງເຮັດການລົງຫລາຍ,
B. ມີຄວາມພ້ອມທາງຮ່າງກາຍແລະສມອງ ເພື່ອເຮັດການທີ່ເໝາະສົມກັບທ່ານ,
C. ວ່າງເພື່ອຮັບເຮັດການທີ່ເໝາະສົມກັບທ່ານ,
D. ກຳລັງເອົາໃຈໃສ່ຢ່າງເໝາະສົມໃນການຊອກຫາວຽກງານ,
E. ບໍ່ເຂົ້າຮ່ວມ ຫລື ມີສ່ວນໄດ້ສ່ວນເສັຍໂດຍກົງໃນຂໍ້ຂັດແຍ້ງເລື່ອງແຮງງານ, ແລະ
F. ປອດຈາກຂໍ້ໃດທີ່ເຮັດໃຫ້ຂາດຄຸນສົມບັດ

ນອກຈາກສິ່ງຂ້າງເທິງເຫລົ່ານີ້, ທ່ານຍັງຈະຕ້ອງລໍຖ້າໜຶ່ງ (1) ອາທິດອີກກ່ອນຈະເລີ່ມຕົ້ນຮັບເງິນປະກັນວ່າງງານໄດ້. ຕ້ອງແມ່ນອາທິດວ່າງງານທີ່ຖືກຕ້ອງຕາມເງື່ອນໄຂຈຶ່ງຈະນັບໄດ້ວ່າເປັນການລໍຖ້າໜຶ່ງອາທິດ. ເພື່ອຈະຖືວ່າເປັນ ອາທິດວ່າງງານທີ່ຖືກຕ້ອງຕາມເງື່ອນໄຂ ຕ້ອງແມ່ນຫລັງຈາກທ່ານໄດ້ຍື່ນຄຳຮຽກຮ້ອງສິດຄັ້ງທຳອິດ, ຊຶ່ງອາທິດນັ້ນທ່ານບໍ່ໄດ້ຄ່າຈ້າງເລີຍ ຫລືໄດ້ຄ່າຈ້າງບໍ່ເຖິງ 140% ຂອງຈຳນວນເງິນປະກັນວ່າງງານຕໍ່ໜຶ່ງອາທິດຂອງທ່ານ, ທ່ານຕ້ອງມີເງື່ອນໄຂຄົບສຳລັບອາທິດນັ້ນ, ແລະບໍ່ມີຂໍ້ໃດທີ່ເຮັດໃຫ້ທ່ານຂາດຄຸນສົມບັດໃນອາທິດນັ້ນ.

**ສາມາດເຮັດການ** ແປວ່າ ມີຄວາມພ້ອມທາງຮ່າງກາຍແລະສມອງ ເພື່ອເຮັດການທີ່ຄ້າຍຄືກັນກັບວຽກງານທີ່ທ່ານເຄີຍເຮັດໃນອະດີດ ຫລື ວຽກງານອື່ນທີ່ເໝາະສົມກັບທ່ານ ອີງຕາມປະສົບການແລະການຝຶກອົບຮົມຂອງທ່ານ ແລະຊຶ່ງຄາດຫວັງຢ່າງມີເຫດຜົນວ່າທ່ານອາດໄດ້ວຽກງານປະເພດນັ້ນໄດ້.

**ວ່າງເພື່ອຮັບເຮັດການໄດ້** ແປວ່າ ພ້ອມຮັບເຮັດວຽກງານທັນທີໂລດ, ໂດຍບໍ່ມີຂໍ້ຫຍຸ້ງຍາກຫຍັງ ບໍ່ວ່າເລື່ອງສ່ວນຕົວຫລືແນວອື່ນໃດໆກໍຕາມ ທີ່ເຮັດໃຫ້ທ່ານບໍ່ສາມາດຮັບວຽກງານຊຶ່ງເໝາະສົມກັບທ່ານ.

**ການເອົາໃຈໃສ່ຊອກຫາວຽກງານຢ່າງເໝາະສົມ** ແປວ່າ ການພະຍາຍາມດ້ວຍຕົວທ່ານເອງເພື່ອຊອກຫາວຽກງານຊຶ່ງເໝາະສົມກັບທ່ານ ໂດຍການຕິດຕໍ່ກັບຄົນທີ່ມີສິດອຳນາດວ່າຈ້າງ, ການຕິດຕໍ່ກັບຫ້ອງການພະແນກບໍລິການຄົນງານ DWS ທ້ອງຖິ່ນ, ແລະອື່ນໆ, ຫລື ໂດຍການໃຊ້ວິທີຊອກຫາວຽກງານທີ່ເໝາະສົມສຳລັບອາຊີບຂອງທ່ານ ຊຶ່ງຈະເຮັດໃຫ້ທ່ານຫາວຽກງານໄດ້ໄວເທົ່າທີ່ຈະໄວໄດ້.

# ມີຫລາຍຄົນເຄີຍຖາມວ່າ:

**ເບັ້ຍປະກັນການວ່າງງານ ຖືກຫັກໄວ້ກ່ອນຂ້າພະເຈົ້າໄດ້ຮັບເງິນເຊັກຄ່າຈ້າງບໍ?**
ບໍ່, ບໍ່ມີການຫັກເອົາເບັ້ຍປະກັນຈາກເງິນເຊັກຄ່າຈ້າງຂອງທ່ານ, ເພາະວ່າບັນດານາຍຈ້າງທັງຫລາຍໃນຣັຖອາຄັນຊໍທີ່ມີການຄຸ້ມປະກັນຢູ່ພາຍໃຕ້ກົດໝາຍວ່າດ້ວຍພະແນກບໍລິການຄົນງານ ຕ້ອງເສັຍເບັ້ຍປະກັນນີ້ເປັນພາສີປະຈຳໄຕມາດ(ທຸກ 3 ເດືອນ).

**ເປັນໄປໄດ້ທີ່ຂ້າພະເຈົ້າຈະໄດ້ເງິນວ່າງງານສຳລັບ ລະຍະລໍຖ້າໜຶ່ງອາທິດວ່າງງານທີ່ຖືກຕ້ອງຕາມເງື່ອນໄຂ ບໍ?**
ເປັນໄປບໍ່ໄດ້, ເພາະວ່າກົດໝາຍກຳນົດວ່າຈຳເປັນຕ້ອງລໍຖ້າໂດຍບໍ່ຈ່າຍເງິນວ່າງງານສຳລັບອາທິດທຳອິດທີ່ຮຽກຮ້ອງສິດແລະມີເງື່ອນໄຂຖືກຕ້ອງ. ທ່ານຈະບໍ່ຮັບເງິນວ່າງງານສຳລັບອາທິດທຳອິດນັ້ນ, ແຕ່ບໍ່ເປັນຫຍັງເພາະວ່າຈະບໍ່ມີຜົນເສັຍຫາຍຫລືລົດລົງຈາກຜົນປະໂຫຍດສູງສຸດທີ່ທ່ານຈະໄດ້ຮັບ.

**ຖ້າຂ້າພະເຈົ້າເປີດການຮຽກຮ້ອງສິດຄືນອີກ ກໍຈະຕ້ອງລໍຖ້າໜຶ່ງອາທິດອີກບໍ?**
ບໍ່ຕ້ອງລໍຖ້າ, ເພາະວ່າຕ້ອງລໍຖ້າໂດຍມີເງື່ອນໄຂຖືກຕ້ອງພຽງເທື່ອດຽວຕລອດການຮຽກຮ້ອງສິດເທື່ອໜຶ່ງ. ແຕ່ວ່າ ຫລັງຈາກການຮຽກຮ້ອງສິດເທື່ອໜຶ່ງໝົດ ແລະທ່ານໄດ້ຍື່ນການຮຽກຮ້ອງສິດໃໝ່ ທ່ານກໍຕ້ອງລໍຖ້າລະຍະໜຶ່ງອາທິດທຳອິດອີກ.

**ຖ້າຂ້າພະເຈົ້າໄດ້ວຽກງານບໍ່ເຕັມເວລາໃນຊ່ວງເວລາທີ່ກຳລັງຮັບເງິນປະກັນວ່າງງານ, ຂ້າພະເຈົ້າຈະຕ້ອງລາຍງານຄ່າຈ້າງທຸກໆອາທິດບໍ?**
ແມ່ນແລ້ວ, ທ່ານຕ້ອງລາຍງານຈຳນວນຊົ່ວໂມງເຮັດວຽກງານແລະຄ່າຈ້າງທັງໝົດໃນແຕ່ລະອາທິດທີ່ທ່ານອ້າງສິດຮັບເງິນປະກັນວ່າງງານ, ບໍ່ວ່າທ່ານຮັບຈ້າງບ່ອນໃດກໍຕາມ.

**ເມື່ອຂ້າພະເຈົ້າລາຍງານຮຽກຮ້ອງສິດຮັບເງິນວ່າງງານປະຈຳອາທິດ ຕ້ອງລາຍງານຄ່າຈ້າງລວມ(ກ່ອນຫັກພາສີແລະອື່ນໆ) ຫລື ຕ້ອງລາຍງານຄ່າຈ້າງສຸດທິ?**
ທ່ານຕ້ອງລາຍງານຈຳນວນຊົ່ວໂມງເຮັດວຽກງານແລະຄ່າຈ້າງທັງໝົດໃນແຕ່ລະອາທິດທີ່ທ່ານອ້າງສິດຮັບເງິນປະກັນວ່າງງານ. ທ່ານຕ້ອງລາຍງານວ່າຄ່າຈ້າງນັ້ນແມ່ນສຳລັບການເຮັດວຽກງານອາທິດໃດ - ບໍ່ແມ່ນວ່າໄດ້ຮັບຄ່າຈ້າງເມື່ອອາທິດໃດ.

**ຂ້າພະເຈົ້າຮັບຄ່າຈ້າງວຽກງານຜລິດ ຈຶ່ງບໍ່ຮູ້ລ່ວງໜ້າວ່າຈະໄດ້ຄ່າຈ້າງລວມຫລາຍປານໃດ. ເຮັດຢ່າງໃດຂ້າພະເຈົ້າຈຶ່ງຈະລາຍງານຮຽກຮ້ອງສິດປະຈຳອາທິດຢ່າງຖືກຕ້ອງໄດ້ໃນເມື່ອຍັງບໍ່ຮູ້ວ່າຈະໄດ້ຄ່າຈ້າງຫລາຍປານໃດສຳລັບອາທິດນັ້ນ?**
ຖ້າທ່ານບໍ່ຮູ້ວ່າຈະໄດ້ຄ່າຈ້າງຫລາຍປານໃດສຳລັບອາທິດໜຶ່ງ, ທ່ານຕ້ອງລໍຖ້າຈົນຮູ້ເສັຍກ່ອນ ຈຶ່ງຄ່ອຍລາຍງານຮຽກຮ້ອງສິດປະຈຳອາທິດດັ່ງກ່າວ. ກົດ DWS Regulation 14(a) ກຳນົດວ່າ ບຸກຄົນທີ່ເຮັດວຽກງານບໍ່ເຕັມເວລາ ມີເວລາ 14 ມື້ນັບຕັ້ງແຕ່ວັນທີທີ່ໄດ້ຮັບຄ່າຈ້າງ ເພື່ອລາຍງານຮຽກຮ້ອງສິດປະຈຳອາທິດທີ່ໄດ້ເຮັດວຽກງານນັ້ນ.

**ຂ້າພະເຈົ້າສາມາດປ່ຽນໃຈເລື່ອງການຫັກພາສີໃຫ້ຣັຖບານກາງໄດ້ບໍ?**
ປ່ຽນໄດ້. ຫລັງຈາກທ່ານເລືອກຄັ້ງທຳອິດກ່ຽວກັບຖານະຂອງທ່ານເລື່ອງການຫັກພາສີໃຫ້ຣັຖບານກາງ, ທ່ານຍັງສາມາດປ່ຽນໄດ້ເທື່ອໜຶ່ງພາຍໃນປີໜຶ່ງທີ່ທ່ານຮັບຜົນປະໂຫຍດຢູ່. ຖ້າທ່ານຕ້ອງການປ່ຽນ ກໍຈົ່ງຕິດຕໍ່ຫ້ອງການ DWS ທ້ອງຖິ່ນຂອງທ່ານ.




**ຖ້າເກີດຂ້າພະເຈົ້າບໍ່ເຫັນດີກັບຄຳຕັດສິນຂອງ DWS ກ່ຽວກັບສິດຂອງຂ້າພະເຈົ້າໃນການຮັບຜົນປະໂຫຍດການວ່າງງານ ຈະໃຫ້ເຮັດແນວໃດ?**
ຝ່າຍທີ່ມີຜົນໄດ້ຜົນເສັຍ (ຜູ້ຮຽກຮ້ອງສິດ ຫລື ບໍຣິສັດ/ນາຍຈ້າງ) ທີ່ບໍ່ເຫັນດ້ວຍກັບຄຳຕັດສິນຈາກ DWS ກໍສາມາດຍື່ນອຸທອນຄຳຕັດສິນໄດ້. ສານອຸທອນ (Appeal Tribunal) ແມ່ນອົງກອນເອກະຣາດ ຊຶ່ງຈະຮັບພິຈາຣະນາຄະດີຂອງທ່ານແລະລົງຄຳຕັດສິນໃໝ່. ມີການອຸທອນຄຳຕັດສິນເປັນຂັ້ນໆຂຶ້ນໄປ ເຖິງ ຄະນະທົບທວນຄະດີ (Board of Review), ແລະຈາກນັ້ນຂຶ້ນໄປເຖິງ ສານອຸທອນແຫ່ງຣັຖອາຄັນຊໍ (Arkansas Court of Appeals).

**ຂ້າພະເຈົ້າຈະຕ້ອງຮັບວຽກວາງທີ່ໃຫ້ຄ່າຈ້າງຕ່ຳກວ່າທີ່ເຄີຍໄດ້ຮັບໃນວຽກງານບ່ອນເຮັດຄັ້ງສຸດທ້າຍບໍ?**
ບຸກຄົນທີ່ມີກຳນົດຕ້ອງຊອກຫາວຽກງານ ກໍຕ້ອງຍອມຮັບວຽກງານທີ່ເໝາະສົມໃນເມື່ອມີໃຫ້ເຮັດ. ຄວາມໝາຍຄຳວ່າ "ວຽກງານທີ່ເໝາະສົມ" ອາດຈະຂຶ້ນກັບປັດໄຈຫລາຍຢ່າງ, ຢ່າງເຊັ່ນ - ຈະໄດ້ຄ່າຈ້າງເທົ່າໃດ, ທ່ານວ່າງງານມາແລ້ວດົນປານໃດ, ແລະ ວຽກງານບ່ອນທ່ານເຮັດຄັ້ງສຸດທ້າຍ ທ່ານໄດ້ຄ່າຈ້າງເທົ່າໃດ. ກົດໝາຍບໍ່ໄດ້ບອກວ່າທ່ານຕ້ອງຄ່າຈ້າງເທົ່າກັນກັບວຽກງານບ່ອນເຮັດຄັ້ງສຸດທ້າຍ.

**ຂ້າພະເຈົ້າຮຽນຫລືຝຶກວິຊາຊີບໃນຂະນະທີ່ຮັບຜົນປະໂຫຍດການວ່າງງານໄດ້ບໍ?**
ກົດໝາຍຣັຖອາຄັນຊໍກຳນົດວ່າ ຂະນະທີ່ຮັບເງິນປະກັນວ່າງງານ ທ່ານຈະຕ້ອງພ້ອມທາງຄວາມສາມາດແລະເວລາເພື່ອໃຫ້ເຮັດວຽກງານໄດ້, ແລະຕ້ອງຍອມຮັບວຽກງານທີ່ເໝາະສົມໃນເມື່ອມີໃຫ້ເຮັດ. ແຕ່ວ່າໃນບາງກໍລະນີ ມີການຍົກເວັ້ນຈາກຂໍ້ກຳນົດກ່ຽວກັບການຊອກຫາວຽກງານ ຖ້າທ່ານກຳລັງຮຽນຫລືຝຶກວິຊາຊີບຢູ່ເຕັມເວລາ ໃນຫລັກສູດທີ່ຫົວໜ້າຂອງພະແນກບໍລິການຄົນງານໄດ້ອະນຸມັດ; ຫລືຖ້າທ່ານກຳລັງຮຽນຫລືຝຶກວິຊາຊີບຢູ່ເຕັມເວລາໃນໂຄງການຂອງຣັຖບານກາງທີ່ໄດ້ຮັບອະນຸມັດ ຢ່າງເຊັ່ນ ພາຍໃຕ້ກົດໝາຍວ່າດ້ວຍການຄ້າ. ທ່ານຈົ່ງຖາມນຳຫ້ອງການ DWS ທ້ອງຖິ່ນເບິ່ງວ່າທ່ານມີເງື່ອນໄຂການຍົກເວັ້ນອັນໃດອັນໜຶ່ງຫລືບໍ່.

ຖ້າທ່ານບໍ່ມີເງື່ອນໄຂເພື່ອຮັບການຍົກເວັ້ນຈາກການຊອກຫາວຽກງານ, ທ່ານກໍຍັງອາດຈະມີສິດຮັບເງິນວ່າງງານໄດ້ໃນຂະນະທີ່ທ່ານຮຽນຫລືຝຶກວິຊາຢູ່. ທາງພະແນກຈະຕ້ອງພະຈາລະນາເບິ່ງຫລາຍປັດໄຈໃນການລົງຄຳຕັດສິນວ່າ ທ່ານມີສິດ ຫລື ບໍ່ມີສິດຮັບການປະກັນວ່າງງານໃນຂະນະທີ່ທ່ານຮຽນຫລືຝຶກວິຊາຊີບຢູ່. ປັດໄຈທີ່ສຳຄັນກວ່າໝູ່ ກໍຄືເລື່ອງວ່າ ທ່ານຍັງວ່າງພໍເພື່ອເຮັດວຽກງານໄດ້ຫລືບໍ່. ເວົ້າອີກຢ່າງໜຶ່ງກໍຄື, ການຮຽນຫລືຝຶກວິຊາຊີບຕ້ອງບໍ່ເຮັດໃຫ້ທ່ານມີການຕິດຕໍ່ຊອກຫາວຽກງານໜ້ອຍກວ່າຈຳນວນເທື່ອຂັ້ນຕ່ຳສຸດທີ່ໄດ້ກຳນົດເອົາໄວ້ ຫລືມີຜົນເສັຍຕໍ່ການທີ່ທ່ານສາມາດຮັບເຮັດວຽກງານໄດ້.

### ເມື່ອຜົນປະໂຫຍດຂອງຂ້າພະເຈົ້າໝົດ ຈະເປັນຢ່າງໃດ?

ຖ້າທ່ານຍັງບໍ່ທັນໄດ້ວຽກງານອີກແລະເງິນປະກັນວ່າງງານຂອງທ່ານໝົດ(ເບີກຈ່າຍຈົນໝົດ), ທ່ານຈົ່ງຕິດຕໍ່ຫ້ອງການ DWS ທ້ອງຖິ່ນເບິ່ງວ່າທ່ານມີເງື່ອນໄຂໃນການໄດ້ຮັບຜົນປະໂຫຍດຕື່ມ ຫລືອາດຈະມີເງື່ອນໄຂອີກເມື່ອໃດ. ບາງທີທ່ານຈະມີເງື່ອນໄຂສໍາລັບການຮຽກຮ້ອງຜົນປະໂຫຍດແບບທໍາມະດາອີກຮອບໜຶ່ງ, ຫລືສໍາລັບຮັບຜົນປະໂຫຍດແບບຍືດເວລາ ຖ້າວ່າໃນຕອນນັ້ນເປັນລະຍະທີ່ມີການຈ່າຍຜົນປະໂຫຍດແບບຍືດເວລາຢູ່.

ແລະແມ່ນແຕ່ທ່ານຖືກປະຕິເສດເມື່ອຮຽກຮ້ອງການປະກັນວ່າງງານໃໝ່ກໍຕາມ, ແຕ່ຂໍໃຫ້ທ່ານຈົ່ງສືບຕໍ່ຢ້ຽມຢາມຫ້ອງການ DWS ທ້ອງຖິ່ນ ເພື່ອໃຫ້ພວກເພິ່ນຈະສາມາດຊ່ວຍເຫລືອທ່ານໃຫ້ຫລາຍເທົ່າທີ່ຈະຊ່ວຍໄດ້ໃນການທີ່ທ່ານໄດ້ຊອກຫາວຽກງານໃໝ່.

### ເຮັດຢ່າງໃດເພື່ອຈະຄໍານວນລະຍະພື້ນຖານ (base period) ຂອງຂ້າພະເຈົ້າ?

ຈໍານວນເງິນວ່າງງານຂອງທ່ານແມ່ນຂຶ້ນກັບວ່າທ່ານໄດ້ເຮັດວຽກງານຫລາຍປານໃດ ແລະໄດ້ມີຄ່າຈ້າງຫລາຍປານໃດໃນຊ່ວງເວລາ 12 ເດືອນ ທີ່ເອີ້ນວ່າ "ລະຍະພື້ນຖານ" (Base Period). ລະຍະພື້ນຖານ ໄດ້ຖືກກໍານົດເປັນ ໄຕມາດ 1 ເຖິງ 4 ຂອງຫ້າໄຕມາດລ້າສຸດຕາມປະຕິທິນທີ່ໄດ້ຈົບລົງແລ້ວ. ມີ 4 ໄຕມາດ ຕໍ່ໜຶ່ງປີຕາມປະຕິທິນ:

ໄຕມາດທີ 1 ກໍຄື ເດືອນ 1 - 2 - 3
ໄຕມາດທີ 2 ກໍຄື ເດືອນ 4 - 5 - 6
ໄຕມາດທີ 3 ກໍຄື ເດືອນ 7 - 8 - 9
ໄຕມາດທີ 4 ກໍຄື ເດືອນ 10 - 11 - 12

ເພື່ອຈະຄໍານວນລະຍະພື້ນຖານຂອງທ່ານ ກ່ອນອື່ນໃຫ້ທ່ານເບິ່ງວ່າທ່ານໄດ້ຍື່ນຄໍາຮຽກຮ້ອງເງິນວ່າງງານພາຍໃນໄຕມາດຫຍັງ.

| | | | | | | | | | |
|---|---|---|---|---|---|---|---|---|---|
| OCT NOV DEC | JAN FEB MAR | APR MAY JUN | JUL AUG SEP | ← | JAN FEB MAR | | | | ໄຕມາດທີ 1 |
| | JAN FEB MAR | APR MAY JUN | JUL AUG SEP | OCT NOV DEC | ← | APR MAY JUN | | | ໄຕມາດທີ 2 |
| | | APR MAY JUN | JUL AUG SEP | OCT NOV DEC | JAN FEB MAR | ← | JUL AUG SEP | | ໄຕມາດທີ 3 |
| | | | JUL AUG SEP | OCT NOV DEC | JAN FEB MAR | APR MAY JUN | ← | OCT NOV DEC | ໄຕມາດທີ 4 |

ຈໍານວນເງິນວ່າງງານທີ່ທ່ານຈະໄດ້ຮັບແມ່ນຈະຂຶ້ນກັບວຽກງານທີ່ທ່ານໄດ້ເຮັດໃນລະຍະ 12 ເດືອນດັ່ງກ່າວນີ້.





### ຂ້າພະເຈົ້າຈະຕ້ອງເສຍພາສີລາຍໄດ້ຈາກເງິນວ່າງງານໃຫ້ກັບຣັຖບານກາງແລະໃຫ້ກັບຣັຖບໍ?

ແມ່ນແລ້ວ, ເພາະວ່າເງິນວ່າງງານແມ່ນລາຍໄດ້ທີ່ຕ້ອງເສຍພາສີໃຫ້ຣັຖບານກາງ. DWS ໃຫ້ໂອກາດແກ່ຜູ້ຮຽກຮ້ອງຜົນປະໂຫຍດ ເພື່ອເລືອກການຫັກເອົາ 10% ຈາກເງິນປະກັນວ່າງງານຕໍ່ໜຶ່ງອາທິດຂອງທ່ານໄວ້ສໍາລັບເສຍພາສີລາຍໄດ້ໃຫ້ຣັຖບານກາງ.

ແລະເລີ່ມຕົ້ນໃນປີ 2018, ທ່ານຈະຕ້ອງລາຍງານຜົນປະໂຫຍດການວ່າງງານທີ່ໄດ້ຮັບໃສ່ໃນລາຍງານພາສີລາຍໄດ້ຂອງຣັຖອາຄັນຊໍອີກດ້ວຍ.

### ຂ້າພະເຈົ້າຄິດວ່າຈະຖືກວ່າງງານເມື່ອເດືອນໜ້າ; ຂ້າພະເຈົ້າສາມາດຮູ້ດຽວນີ້ໄດ້ບໍວ່າ ຂ້າພະເຈົ້າຈະໄດ້ເງິນວ່າງງານ ຫລາຍປານໃດ?

ບໍ່ໄດ້, ເພາະວ່າບໍ່ມີຂໍ້ມູນນັ້ນໃຫ້ທ່ານຈົນກວ່າທ່ານຈະໄດ້ປະກອບແບບຟອຣ໌ມຮຽກຮ້ອງຜົນປະໂຫຍດທໍາອິດໃຫ້ຮຽບຮ້ອຍເສັຍກ່ອນ. ຂໍ້ມູນທີ່ທ່ານໃຫ້ມາໃນແບບຟອຣ໌ມສມັກກໍຈະຖືກປຽບທຽບໃສ່ກັບຂໍ້ມູນທີ່ກ່ຽວກັບເລກປະກັນສັງຄົມ("ເລກໂຊໂຊ")ຂອງທ່ານໃນຖານຂໍ້ມູນຂອງພວກເຮົາ. ຂໍ້ມູນດັ່ງກ່າວຈະຜ່ານຂະບວນການເພື່ອຕັດສິນໃຫ້ວ່າ ທ່ານມີເງື່ອນໄຂຫລືບໍ່ມີສໍາລັບຮັບຜົນປະໂຫຍດໃນຣັຖອາຄັນຊໍ ແລະເປັນຜົນປະໂຫຍດຫລາຍປານໃດ. ພວກເຮົາຈຶ່ງຈະສົ່ງຈົດໝາຍແຈ້ງໃຫ້ທ່ານຮູ້ຄໍາຕັດສິນເລື່ອງເງິນປະກັນວ່າງງານ, ວ່າທ່ານມີປະຫວັດການຮັບຄ່າຈ້າງພຽງພໍເພື່ອຈະມີຮຽກຮ້ອງສິດຮັບຜົນປະໂຫຍດໄດ້.

### ຫລັງຈາກຂ້າພະເຈົ້າໄດ້ຍື່ນແບບຟອຣ໌ມຮຽກຮ້ອງຜົນປະໂຫຍດ ຂ້າພະເຈົ້າຈະຕ້ອງລໍຖ້າດົນປານໃດກ່ອນຈຶ່ງຄວນຈະເລີ່ມຕົ້ນລາຍງານຮຽກຮ້ອງສິດຮັບເງິນວ່າງງານປະຈໍາທຸກອາທິດ?

ທາງທີ່ດີແມ່ນທ່ານຄວນລໍຖ້າຢ່າງໜ້ອຍສາມ (3) ມື້ຕໍ່ຈາກທ່ຽງຄືນຂອງວັນເສົາຫລັງຈາກມື້ທີ່ທ່ານໄດ້ຍື່ນແບບຟອຣ໌ມທາງອິນເທີແນັຕ ຈຶ່ງຄ່ອຍລາຍງານຮຽກຮ້ອງສິດຮັບເງິນວ່າງງານປະຈໍາອາທິດທໍາອິດນັ້ນ.

ທ່ານສາມາດລາຍງານທຸກໆອາທິດທີ່ຕໍ່ໄປຫລັງຈາກແຕ່ລະອາທິດຈະແລ້ວ.

### ຂ້າພະເຈົ້າຄວນຄາດໝາຍວ່າຈະໄດ້ເລີ່ມຕົ້ນຮັບເງິນວ່າງງານຕັ້ງແຕ່ເມື່ອໃດ?

ຈົ່ງຈໍາໄວ້ວ່າອາທິດທໍາອິດຂອງການຮຽກຮ້ອງສິດຄັ້ງໃໝ່ຈະຖືກນັບວ່າເປັນລະຍະລໍຖ້າໜຶ່ງອາທິດທີ່ຖືກຕ້ອງຕາມເງື່ອນໄຂ, (ສໍາຄັນທີ່ວ່າທ່ານມີເງື່ອນໄຂຄົບ) ແລະທ່ານຈະບໍ່ໄດ້ຮັບເງິນວ່າງງານສໍາລັບອາທິດທໍາອິດນັ້ນ. ການຈ່າຍເງິນວ່າງງານຄັ້ງທໍາອິດແມ່ນເລີ່ມຕົ້ນຈາກອາທິດທີສອງທີ່ທ່ານລາຍງານຮຽກຮ້ອງສິດ. ຢ່າງໃດກໍຕາມ, ເວລາຈ່າຍເງິນວ່າງງານແກ່ທ່ານກໍອາດຈະຂຶ້ນກັບສະຖານະການສະເພາະບຸກຄົນຂອງທ່ານເອງ ແລະອາດຈະຂຶ້ນກັບອຸປະສັກຫລືບັນຫາທີ່ຈະຕ້ອງແກ້ໄຂເສັຍກ່ອນ. ເພື່ອຄໍາແນະນໍາທີ່ລະອຽດກວ່ານີ້ ທ່ານຈົ່ງສຶກສາເບິ່ງ ຄູ່ມືລາຍລະອຽດກ່ຽວກັບເງິນວ່າງງານ (UI Information Handbook) ຊຶ່ງມີໃຫ້ອ່ານໃນໜ້າເວັບໄຊຕ໌ທີ່ມີຫົວຂໍ້ "UI Claimant Forms" ເທິງເວັບໄຊຕ໌ຂອງພວກເຮົາທີ່: https://www.dws.arkansas.gov/

**ຂໍໃຫ້ທ່ານຈົ່ງຕິດຕໍ່ຫ້ອງການ DWS ທ້ອງຖິ່ນທີ່ໃກ້ທ່ານທີ່ສຸດ ຖ້າຫາກທ່ານຕ້ອງການຮັບບໍຣິການຈາກນາຍພາສາຫລືນັກແປເອກະສານໃນການຂຽນປະກອບຄໍາຮຽກຮ້ອງຮັບເງິນປະກັນວ່າງງານ. ພະແນກບໍຣິການຄົນງານ (DWS) ຈະຈັດຫາບໍຣິການນາຍພາສາແລະການແປເອກະສານໃຫ້ແກ່ຄົນທີ່ບໍ່ຮູ້ພາສາອັງກິດດີພໍ (LEP) ໂດຍບໍ່ຄິດຄ່າບໍຣິການ.**

americanjobcenter

Arkansas Department of Workforce Services
#2 Capitol Mall
Little Rock, AR 72201
501-682-2121

# ການປະກັນວ່າງງານໃນ ຣັຖອາຄັນຊໍ



adws
Arkansas Department of Workforce Services

## ຂໍ້ມູນທີ່ຈໍາເປັນສໍາລັບຍື່ນຄໍາຮຽກຮ້ອງຮັບເງິນປະກັນວ່າງງານ

**ມີຂໍ້ມູນຫຍັງທີ່ຈໍາເປັນສໍາລັບຍື່ນຄໍາຮຽກຮ້ອງຮັບເງິນປະກັນວ່າງງານ?**

- ເລກປະກັນສັງຄົມຂອງທ່ານ (ເລກບັດໂຊໂຊ)
- ບັດປະຈໍາຕົວທີ່ມີຮູບຖ່າຍຂອງທ່ານ
- ທີ່ຢູ່ບ່ອນຮັບຈົດໝາຍແລະທີ່ຢູ່ເຮືອນ
- ເລກໂທຣະສັບຂອງທ່ານ
- ຊື່ ແລະ ທີ່ຢູ່ ຂອງນາຍຈ້າງ(ບໍຣິສັດ)ບ່ອນສຸດທ້າຍທີ່ທ່ານໄດ້ເຮັດການ
- ຊື່ ແລະ ເລກທີ ຂອງສະຫະພັນແຮງງານທີ່ທ່ານເປັນສະມາຊິກ ຖ້າທ່ານຊອກວຽກໂດຍຜ່ານສະຫະພັນແຮງງານ
- ຖ້າທ່ານບໍ່ຖືສັນຊາດອະເມຣິກັນ: ເລກທີບັດຄົນຕ່າງດ້າວ, ບັດຜູ້ອາໄສຢ່າງຖາວອນ, ໃບອະນຸຍາດເຮັດການ, ຫລືຂໍ້ມູນການລົງທະບຽນຄົນຕ່າງດ້າວ
- ຂໍ້ມູນບັນຊີທະນາຄານຂອງທ່ານ ຖ້າທ່ານຕ້ອງການຮັບຝາກເງິນປະກັນວ່າງງານເຂົ້າບັນຊີທະນາຄານຂອງທ່ານໂດຍກົງ

http://dws.arkansas.gov

LAO (Rev 11-07)